# ຄູ່ມືແນະນຳຂໍ້ມູນການຄ້າມະນຸດ ແລະ ການຂູດຮີດ

## ການຄ້າມະນຸດແມ່ນຫຍັງ?

ການຄ້າມະນຸດເກີດຂຶ້ນເມື່ອບຸກຄົນໜຶ່ງຈັດການ ຫຼື ຄວບຄຸມບຸກຄົນອື່ນເພື່ອໃຊ້ແຮງງານ ຫຼື ຈັດສະໜອງທາງເພດເພື່ອຜົນປະໂຫຍດຂອງຄົນອື່ນ. ພາຍໃຕ້ກົດໝາຍຂອງລັດມິນີໂຊຕາ, ການຄ້າມະນຸດສາມາດເກີດຂຶ້ນຈາກຫຼາຍຊ່ອງທາງ. ພາຍໃຕ້ກົດໝາຍຂອງລັດຖະບານກາງ, ການຄ້າມະນຸດຕ້ອງມີການໃຊ້ກຳລັງ, ການສໍ້ໂກງ ຫຼື ການບີບບັງຄັບເພື່ອບັງຄັບເຫຍື່ອໃຫ້ເຮັດວຽກ ຫຼື ຂາຍບໍລິການທາງເພດ. ເຫຍື່ອຂອງການຄ້າມະນຸດບໍ່ສາມາດອອກຈາກສະຖານະການຂອງພວກເຂົາໄດ້ດ້ວຍເຫດຜົນຫຼາຍປະການ.

<u>ເພື່ອຄວບຄຸມເຫຍື່ອຂອງພວກເຂົາ, ຜູ້ຄ້າມະນຸດອາດຈະໃຊ້ຫລາຍວິທີ, ລວມມີແຕ່ບໍ່ຈຳກັດແຕ່:</u>

- ການຂົ່ມຂູ່
- ການບັງຄັບ ແລະ ການຄຸກຄາມ
- ການລ່ວງລະເມີດ (ທາງອາລົມ, ທາງຮ່າງກາຍ, ທາງເພດ)
- ການແຍກຕົວ
- ການປະຕິເສດ, ການຕຳນິ ແລະ ການລົດຄ່າ
- ສິດທິພິເສດ ແລະ ຄວາມເໜືອກວ່າ
- ການລ່ວງລະເມີດທາງເສດຖະກິດ
- ຄວາມຮູ້ສຶກຜູກມັດຕໍ່ຄອບຄົວຂອງເຫຍື່ອ
- ການລະງັບເອກະສານ

<u>ບໍ່ມີສັນຍານອັນໃດທີ່ສາມາດລະບຸການຄ້າມະນຸດໄດ້ຢ່າງແນ່ນອນ. ສິ່ງສຳຄັນທີ່ສຸດແມ່ນເພື່ອຊອກຫາຮູບແບບການຄວບຄຸມໂດຍຜູ້ຄ້າຕໍ່ກັບໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ.</u>

## ການຂູດຮີດແມ່ນຫຍັງ?

ການຂູດຮີດເກີດຂຶ້ນເມື່ອບຸກຄົນໜຶ່ງປະຕິບັດຕໍ່ຜູ້ອື່ນຢ່າງບໍ່ຍຸດຕິທຳເພື່ອໃຊ້ປະໂຫຍດຈາກວຽກຂອງພວກເຂົາ. ມີອຳນາດທີ່ເຕັມໄປດ້ວຍຄວາມບໍ່ເທົ່າທຽມກັນລະຫວ່າງຜູ້ສະແຫວງຫາຜົນປະໂຫຍດ ແລະ ເຫຍື່ອໂດຍທີ່ຜູ້ສະແຫວງຫາຜົນປະໂຫຍດຄຸມອຳນາດຢູ່. ການຂູດຮີດສາມາດເຫັນໄດ້ວ່າເປັນຫຼັກຖານເຄິ່ງກາງລະຫວ່າງເສລີພາບທັງໝົດ ແລະ ການຄ້າມະນຸດ. ສະຖານະການເຫຼົ່ານີ້ສາມາດຊ້ອນກັນ ແລະ ບຸກຄົນສາມາດປະສົບກັບປະເດັນທີ່ແຕກຕ່າງກັນລະຫວ່າງອິດສະລະພາບ ແລະ ການຄ້າໃນເວລາທີ່ແຕກຕ່າງກັນ.

ການຂູດຮີດທາງເພດທາງການຄ້າແມ່ນເກີດຂຶ້ນເມື່ອຜູ້ໃດຜູ້ໜຶ່ງແລກປ່ຽນການຮ່ວມເພດເພື່ອສິ່ງທີ່ມີຄ່າ ຫຼື ສັນຍາບາງສິ່ງທີ່ມີມູນຄ່າເຊັ່ນ: ເງິນ, ຢາ, ອາຫານ, ທີ່ພັກອາໄສ, ຄ່າເຊົ່າ ຫຼື ສະຖານະພາບສູງກວ່າໃນໝູ່ ຫຼື ກຸ່ມ. ການຂູດຮີດທາງແຮງງານແມ່ນກຳນົດໃຫ້ຜູ້ອອກແຮງງານປະຕິບັດການອອກແຮງງານທີ່ບໍ່ຍຸຕິທຳ ແລະ ອາດລວມເຖິງການປະຕິເສດການຈ່າຍເງິນເດືອນ ຫຼື ຈ່າຍເງິນເດືອນຕໍ່າກວ່າກຳນົດ ຫຼື ການລັກຂະໂມຍເງິນເດືອນ (ລະງັບການຈ່າຍຄ່າຈ້າງຕາມກົດໝາຍ ຫຼື ຕາມສັນຍາ, ລວມເຖິງການເຮັດວຽກລ່ວງເວລາ).

## ໃຜແມ່ນຜູ້ຄ້າ ແລະ ຜູ້ຊື້?

ຜູ້ໃດຜູ້ໜຶ່ງທີ່ມີອາຍຸໃດໜຶ່ງ, ເຊື້ອຊາດ, ຊົນເຜົ່າ ຫລື ເພດໃດໜຶ່ງກໍ່ສາມາດເປັນຜູ້ຄ້າໄດ້. ຜູ້ຄ້າາມາດເປັນສະມາຊິກໃນຄອບຄົວ ຫຼື ເປັນໝູ່ສະໜິດ ຫຼື ອາດຈະເປັນຄົນທີ່ເປັນແຟນ ຫຼື ຄູ່ຜົວເມຍ.

ຄືກັບຜູ້ຄ້າ, ຜູ້ໃດຜູ້ໜຶ່ງທີ່ມີອາຍຸໃດໜຶ່ງ, ເຊື້ອຊາດ, ຊົນເຜົ່າ ຫລື ເພດໃດໜຶ່ງກໍ່ສາມາດເປັນຜູ້ຊື້ໄດ້. ພວກເຂົາມາຈາກໃນເມືອງ, ຊົນນະບົດ ແລະ ເຂດຊານເມືອງ. ຜູ້ຊື້ໃຊ້ອິນເຕີເນັດ, ການຊັກຊວນດ້ວຍບຸກຄົນ ແລະ ເຄືອຂ່າຍປາກຕໍ່ປາກເພື່ອຊື້ການມີເພດສຳພັນ.

## ໃຜແມ່ນເຫຍື່ອ?

ຜູ້ໃດໆກໍສາມາດເປັນເຫຍື່ອຂອງການຄ້າມະນຸດໄດ້. ເຫຍື່ອ/ຜູ້ລອດຊີວິດມາຈາກຫຼາຍພື້ນຖານ, ເຊື້ອຊາດ, ເພດ, ຄວາມເຊື່ອທາງເພດ, ສະຖານະພາບພົນລະເມືອງ ແລະ ສະຖານະພາບທາງເສດຖະກິດ.

ຜູ້ຄ້າເລັງໃສ່ບຸກຄົນທີ່ມີຊ່ອງຫວ່າງທີ່ຜູ້ຄ້າສາມາດໃຊ້ຈັດການ ແລະ ຄວບຄຸມໄດ້ບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ. ສະພາບສັງຄົມຂອງຊຸມຊົນເຊັ່ນວ່າ: ອັດຕາການຫວ່າງງານສູງ ຫຼື ການຂາດແຄນທາງຊັບພະຍາກອນສາມາດເຮັດໃຫ້ມັນງ່າຍຂຶ້ນສຳລັບພວກຄ້າມະນຸດເພື່ອເລັງໃສ່ເຫຍື່ອ. ເງື່ອນໄຂທີ່ເພີ່ມຄວາມສ່ຽງຂອງການຄ້າລວມມີ:

- ຄວາມທຸກຍາກ
- ການຫວ່າງງານ
- ຄວາມເຊື່ອທາງເພດ ແລະ ການຈຳແນກເພດ
- ອາຍຸ – ເດັກນ້ອຍ, ຊາວໜຸ່ມ, ຜູ້ເຖົ້າ
- ສະຖານະອົບພະຍົບ
- ຊົນກຸ່ມນ້ອຍ
- ປະຫວັດຂອງການລ່ວງລະເມີດ
- ການເພິ່ງພາສານເຄມີ
- ສະຖານະພາບຄວາມພິການ
- ການບໍ່ມີບ່ອນຢູ່ອາໄສ

## ຂ້ອຍຄວນເວົ້າກ່ຽວກັບການຄ້າມະນຸດແນວໃດ?

ຄຳສັບທີ່ພວກເຮົາໃຊ້ເປັນແນວທາງໃຫ້ພວກເຮົາໃນການເບິ່ງສະຖານະການ ແລະ ອື່ນໆ. ມັນເປັນສິ່ງສຳຄັນທີ່ຈະຕ້ອງໃຊ້ຄຳສັບທີ່ຫຼຸດມົນທິນ ແລະ ເຮັດໃຫ້ຄົນຮູ້ຖືກສຶກຍອມຮັບ ເພື່ອໃຫ້ພວກເຂົາສາມາດກ້າວໄປທາງໜ້າເພື່ອຂໍຄວາມຊ່ວຍເຫລືອໂດຍບໍ່ມີຄວາມອາຍ. ໃຊ້ຄຳສັບທີ່ລະອຽດອ່ອນ ແລະ ເໝາະສົມເຊັ່ນ: ການຄ້າປະເວນີທາງເພດ, ເຫຍື່ອຈາກການຄ້າມະນຸດ, ຜູ້ລອດຊີວິດ ຫຼື ຜູ້ທີ່ຖືກຂູດຮີດ ຫຼື ຖືກຄ້າມະນຸດ.

## ຂ້ອຍຄວນເຮັດແນວໃດຖ້າຫາກຂ້ອຍສົງໄສການຄ້າມະນຸດ?

- ຕິດຕໍ່ [ຜູ້ຂັບເຮືອໃນລະດັບພາກພື້ນທີ່ປອດໄພຂອງທ່າເຮືອ (Safe Harbor Regional Navigator) (http://www.health.state.mn.us/communities/safeharbor/response/navigators.html)](http://www.health.state.mn.us/communities/safeharbor/response/navigators.html) ຂອງເຈົ້າ ຫຼື ຕິດຕໍ່ສາຍດ່ວນມື້ທຳອິດ (Day One Hotline) ທີ່ 1-866-223-1111 ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບບໍລິການທີ່ມີຢູ່ໃນພື້ນທີ່ຂອງທ່ານ.
- ລາຍງານສະຖານະການການຄ້າທີ່ໜ້າສົງໄສໃນຟອມຂໍ້ມູນຂອງສຳນັກງານຄະດີອາຍາ (Bureau of Criminal Apprehension's (BCA) Tip Form) ຫຼື ໂທຫາ BCA ທີ່ເບີ 1-877-996-6222 ຫຼື ອີເມວ bca.tips@state.mn.us
- ໂທ 911 ຖ້າທ່ານ ຫຼື ບາງຄົນທີ່ທ່ານຮູ້ຈັກກຳລັງຕົກຢູ່ໃນອັນຕະລາຍ.

## ແຫຼ່ງທີ່ມາ

- [ທ່າເຮືອທີ່ປອດໄພຂອງລັດມິນີໂຊຕາ (Minnesota Safe Harbor) (https://www.health.state.mn.us/communities/safeharbor/index.html)](https://www.health.state.mn.us/communities/safeharbor/index.html)
- ສາຍດ່ວນສຸກເສີນມື້ທຳອິດຂອງລັດມິນີໂຊຕາ (Minnesota Day One Crisis Hotline) - 866-223-1111

SAFE HARBOR

DEPARTMENT OF HEALTH

ຄຳແນະນຳນີ້ແມ່ນສ້າງຂຶ້ນໂດຍພະແນກສາທາລະນະສຸກຂອງລັດມິນີໂຊຕາພາຍໃຕ້ 2016-MU-MU-K153, ມອບໂດຍຫ້ອງການຜູ້ເຄາະຮ້າຍຈາກອາດຊະຍາກຳ, ຫ້ອງການໂຄງການຍຸຕິທຳ, ພະແນກຍຸຕິທຳສະຫະລັດອາເມລິກາ. ຄວາມຄິດເຫັນ ຫຼື ຂໍ້ສະເໜີແນະທີ່ສະແດງອອກໃນຄູ່ມືນີ້ແມ່ນຄວາມຄິດເຫັນຂອງຜູ້ຂຽນ ແລະ ບໍ່ຈຳເປັນຕ້ອງສະແດງຕຳແໜ່ງຂອງຫ້ອງການ ຫຼື ນະໂຍບາຍຂອງພະແນກຍຸຕິທຳສະຫະລັດອາເມລິກາ.

ປັບປຸງຫຼ້າສຸດ 3/2020